ຮຽນ:
ພະນະທ່ານ ຍິ່ງລັກ ຊິນນະວັດ, ນາຍົກລັດຖະມົນຕີ ລາດຊະນາຈັກໄທ
ພະນະທ່ານ ທອງສິງທຳມະວົງ, ນາຍົກລັດຖະມົນຕີ ສປປ ລາວ

ສຳເນົາ: ພະນະທ່ານ ຈູມມະລີ ໄຊຍະສອນ, ປະທານປະເທດ ສປປ ລາວ

ພວກຂ້າພະເຈົ້າມີຈຸດປະສົງໃນການສະແດງຄຳຄິດເຫັນກ່ຽວກັບແຜນການສ້າງເຂື່ອນໄຟຟ້າໄຊຍະບູລີ ເຊິ່ງຈະສ້າງຂື້ນໃນສາຍນ້ຳຂອງ.

ເຂື່ອນໄຊຍະບູລີ ຈະສ້າງຄວາມສ່ຽງດ້ານສະບຽງອາຫານໃຫ້ແກ່ປະຊາກອນຫລາຍລ້ານຄົນ ເພາະວ່ານ້ຳຂອງເປັນສາຍນ້ຳຈືດທີ່ໃຫ້ສະບຽງອາຫານປະເພດປາຫລາຍທີ່ສຸດໃນໂລກ ເຊິ່ງປະຊາກອນທີ່ອາໃສໃນພາກພື້ນແມ່ນ້ຳຂອງອີງອາໃສຕະຫລອດມາ.

ນັກວິທະຍາສາດຈຳນວນຫລວງຫລາຍໄດ້ໃຫ້ຄຳເຫັນວ່າ ເຂື່ອນໄຊຍະບູລີ ຈະສ້າງບັນຫາດ້ານສິ່ງແວດລ້ອມ, ສັງຄົມ ແລະ ເສດຖະກິດໃນລະດັບພູມມີພາກ ເຊິ່ງຜົນກະທົບດັ່ງກ່າວບໍ່ສາມາດຫລຸດຜ່ອນໄດ້.

ຍ້ອນວ່າຍັງມີຊ່ອງຫວ່າງຂອງຄວາມຮູ້ໃນການເຂົ້າໃຈຜົນກະທົບທີ່ຈະເກີດຂື້ນ, ດັ່ງນັ້ນ ອົງການແມ່ນ້ຳຂອງ (MRC) ຈື່ງໄດ້ແນະນຳໃຫ້ເລື່ອນການຕັດສິນໃຈໃນການສ້າງເຂື່ອນໃນແມ່ນ້ຳຂອງອອກໄປ 10 ປີ ເພື່ອມີເວລາພຽງພໍໃນການສືກສາຄົ້ນຄວ້າຕື່ມ.

ພວກຂ້າພະເຈົ້າ ໄດ້ຮູ້ວ່າ ຈະມີການຕັດສິນໃຈໃນການອານຸມັດການສ້າງເຂື່ອນໄຊຍະບູລີ ໃນອານາຄົດອັນໃກ້ນີ້, ດັ່ງນັ້ນ,ພວກຂ້າພະເຈົ້າຈື່ງຮຽນສະເຫນີມາຍັງທ່ານເພື່ອ:

> ຍົກເລີກການສ້າງເຂື່ອນໄຊຍະບູລີ ແລະ ເລື່ອນການຕັດສິນໃຈໃນການສ້າງເຂື່ອນໃສ່ແມ່ນ້ຳຂອງທັງຫມົດອອກໄປຢ່າງຫນ້ອຍ 10 ປີ ຈົນກວ່າຈະມີການສືກສາເພີ້ມເຕີມ.
>
> ນອກຈາກນັ້ນ, ພວກຂ້າພະເຈົ້າຮຽນສະເຫນີມາຍັງລັດຖະບານໄທ ຍົກເລີກແຜນໃນການຊື້ໄຟຟ້າຈາກເຂື່ອນໄຊຍະບູລີ ແລະ ເຂື່ອນນ້ຳຂອງອື່ນໆ.
>
> ຮຽນມາດ້ວຍຄວາມເຄົາລົບນັບຖືຢ່າງສູງ,